ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ | ເລກທີ 1061 /ກງ
ນະຄອນຫຼວງວຽງຈັນ, ວັນທີ ໒໒ ເມສາ ໒໐໒໐

# ແຈ້ງການ

ເຖິງ : ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີລາຍໄດ້ ແລະ ດຳເນີນທຸລະກິດ ໃນຂອບເຂດທົ່ວປະເທດ

ເລື່ອງ: ການຈັດຕັ້ງປະຕິບັດ ພັນທະອາກອນ ຕາມຂໍ້ຕົກລົງ ວ່າດ້ວຍການກຳນົດນະໂຍບາຍ ແລະມາດຕະການ ເພື່ອຫລຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ COVID-19

- ອີງຕາມ ກົດໝາຍ ວ່າດ້ວຍການຄຸ້ມຄອງສ່ວຍສາອາກອນສະບັບ ເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອາກອນລາຍໄດ້ສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ,ລົງວັນທີ 19 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018;
- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ກ່ຽວກັບການເພີ່ມທະວີມາດຕະການສະກັດກັ້ນ, ກັນກາດລະບາດ, ຄວບຄຸມ ແລະກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19;
- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ເລກທີ 31/ນຍ, ລົງວັນທີ 02 ເມສາ 2020 ວ່າດ້ວຍການກຳນົດນະໂຍບາຍ ແລະມາດຕະການ ເພື່ອຫລຸດຜ່ອນຜົນກະທົບຈາກການລະບາດຂອງພະຍາດ COVID-19 ຕໍ່ເສດຖະກິດຂອງລາວ.

ລັດຖະບານມີນະໂຍບາຍ ຊຸກຍູ້ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີລາຍໄດ້ ຈາກເງິນເດືອນ ແລະ ລາຍໄດ້ຕ່າງໆ ແລະ ຜູ້ດຳເນີນທຸລະກິດ ໃນຂອບເຂດທົ່ວປະເທດ ໃຫ້ມີຄວາມສະດວກ ວ່ອງໄວ ໂປ່ງໃສ ໃນການປະຕິບັດ ການແຈ້ງ-ມອບ ອາກອນ ດ້ວຍຕົນເອງ ຜ່ານລະບົບທັນສະໄໝ ແລະ ຊຳລະຜ່ານທະນາຄານ ຕາມຂອບກຳນົດເວລາ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 26,28 ແລະ32 ຂອງກົດໝາຍວ່າດ້ວຍ ການຄຸ້ມຄອງສ່ວຍສາອາກອນ ສະບັບ ເລກທີ66/ສພຊ ລົງວັນທີ 17 ມິຖຸນາ 2019. ເຖິງຢ່າງໃດກໍຕາມ ໃນໄລຍະການແຜ່ລະບາດຂອງພະຍາດ COVID-19 ຊຶ່ງມີຜົນກະທົບຕໍ່ເສດຖະກິດ ຢ່າງກວ້າງຂວາງ, ສະນັ້ນ, ເພື່ອແບ່ງເບົາຈາກຜົນກະທົບ ດັ່ງກ່າວ.

## ກະຊວງການເງິນ ອອກແຈ້ງການ ດັ່ງນີ້:

1. ໃຫ້ປະຕິບັດນະໂຍບາຍຍົກເວັ້ນ ການປັບໃໝທີ່ເກີດຂຶ້ນຈາກການມອບຊັກຊ້າ 0,1% ຕໍ່ວັນ ແລະ ຊ້າແສນກີບຕໍ່ຄັ້ງ ສຳລັບການແຈ້ງຊັກຊ້າ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 73 ຂອງກົດ ໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019; ມາດຕາ 38 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ,ລົງວັນທີ 19 ມິຖຸນາ 2019 ແລະ ມາດຕາ 60 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018 ໃຫ້ບັນດາຫົວໜ່ວຍທຸລະກິດທີ່ຍັງບໍ່ທັນໄດ້ແຈ້ງ-ມອບພັນທະອາກອນຂອງຕົນ ເລີ່ມແຕ່ເດືອນ ເມສາ, ພຶດສະພາ, ມິຖຸນາ 2020.
2. ໃຫ້ ແຈ້ງ-ມອບ ອາກອນ ຂອງແຕ່ລະເດືອນຕາມກົດໝາຍກຳນົດ ຫຼື ບໍ່ໃຫ້ກາຍໄລຍະເວລາ ຄື:
   (1) ການແຈ້ງ-ມອບ ອາກອນ ຂອງເດືອນ ເມສາ ແລະ ເດືອນ ພຶດສະພາ ບໍ່ໃຫ້ກາຍທ້າຍ ເດືອນ ມິຖຸນາ 2020;
   (2) ການແຈ້ງ-ມອບ ອາກອນ ຂອງເດືອນ ມິຖຸນາ ບໍ່ໃຫ້ກາຍທ້າຍ ເດືອນ ກໍລະກົດ 2020;
   (3) ສຳລັບການແຈ້ງ-ມອບ ອາກອນ ຂອງເດືອນ ກໍລະກົດ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ.

3. ໃນກໍລະນີ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃດ ທີ່ຍັງບໍ່ທັນໄດ້ປະຕິບັດ ການແຈ້ງ-ມອບ ນັບແຕ່ເດືອນ ມັງກອນ ປີ 2020 ເປັນຕົ້ນມາ ຈະໄດ້ຮັບການຍົກເວັ້ນ ການປັບໃໝ ທີ່ເກີດຂຶ້ນຈາກການມອບຊັກຊ້າ 0,1% ຕໍ່ວັນ ແລະ ຫ້າແສນກີບ ຕໍ່ຄັ້ງສໍາລັບການແຈ້ງຊັກຊ້າ ແຕ່ມີເງື່ອນໄຂສະເໜີ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຫລົ່ານັ້ນ ຕ້ອງແຈ້ງ-ມອບ ອາກອນ ບໍ່ໃຫ້ກາຍທ້າຍເດືອນພຶດສະພາ ໃຫ້ສໍາເລັດ ຈຶ່ງຈະໄດ້ຮັບສິດໃນການປະຕິບັດນະໂຍບາຍຍົກເວັ້ນ; ພ້ອມທັງ ສະເໜີໃຫ້ ສະໜອງເນື້ອໃນການແຈ້ງ ການມອບໃຫ້ຊັດເຈນ ໃນແຕ່ລະເດືອນ ເພື່ອເປັນຂໍ້ມູນອ້າງອີງໃນເວລາ ມີການກວດກາ ຕໍ່ການໄດ້ຮັບສິດໃນການປະຕິບັດນະໂຍບາຍຍົກເວັ້ນ;
4. ການກໍານົດການແຈ້ງ-ມອບ ອາກອນ ຕາມຂໍ້ 1,2 ແລະ ຂໍ້ 3 ຂອງແຈ້ງການສະບັບນີ້ ແມ່ນບໍ່ສາມາດນໍາໃຊ້ກັບເງື່ອນໄຂ ຂອງການຂໍ ຫັກອາກອນມູນຄ່າເພີ່ມ ແລະ ການຂໍເງິນຄືນອາກອນມູນຄ່າເພີ່ມ ຕາມທີ່ກົດໝາຍໄດ້ກໍານົດ;
5. ສໍາລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກໄດ້ແຈ້ງ-ມອບ ອາກອນຈາກການປັບໃໝ ກ່ອນແຈ້ງການສະບັບນີ້ແມ່ນ ຈະບໍ່ໄດ້ຮັບສິດໃນການຍົກເວັ້ນຄ່າປັບໃໝ ແລະ ຈະບໍ່ໄດ້ສົ່ງຄືນເງິນປັບໃໝທີ່ໄດ້ແຈ້ງມອບໃນຜ່ານມາ;
6. ມອບໃຫ້ ສ່ວຍສາອາກອນ ແຕ່ຂັ້ນສູນກາງຮອດທ້ອງຖິ່ນ ຕິດຕາມ, ປັບປຸງ ແລະ ແກ້ໄຂ ລະບົບຂໍ້ມູນຂ່າວສານຄຸ້ມຄອງ ເກັບລາຍຮັບ (TaxRIS) ໃຫ້ສາມາດຮອງຮັບຕາມເງື່ອນໄຂທີ່ກ່າວມາຂ້າງເທິງໃຫ້ໄດ້ຮັບຜົນເປັນຢ່າງດີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຮອງນາຍົກລັດຖະມົນຕີ
ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ